**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ....10....../ສພຂ

ບໍ່ແກ້ວ, ວັນທີ..24..ມັງກອນ..2024

# ມະຕິ

## ຂອງກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງຂອງເຈົ້າແຂວງ ແຂວງບໍ່ແກ້ວ
## ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ແຂວງບໍ່ແກ້ວ

- **ອີງຕາມ** ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງປີ 2015 ) ມາດ ຕາ 77 ຂໍ້ 2.
- **ອີງຕາມ** ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ ລົງວັນທີ 30 ມິຖຸນາ 2020, ມາດຕາ 11 ຂໍ້ 1.

ພາຍຫຼັງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ໄດ້ຄົ້ນຄ້ວາພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂໍ້ຕົກລົງຂອງເຈົ້າແຂວງ ແຂວງບໍ່ແກ້ວ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ແຂວງບໍ່ແກ້ວ ໃນວາລະທີ່ 5 ຂອງກອງປະຊຸມ ຄັ້ງວັນທີ 24 ມັງກອນ 2024.

### ກອງປະຊຸມຕົກລົງ:

ມາດຕາ 1: ຮັບຮອງເອົາ ຂໍ້ຕົກລົງຂອງເຈົ້າແຂວງ ແຂວງບໍ່ແກ້ວ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ແຂວງບໍ່ແກ້ວ ດ້ວຍຄະແນນສຽງເຫັນດີຫຼາຍກ່ວາເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາປະຊາຊົນແຂວງທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2: ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງບໍ່ແກ້ວ**

ຈອມສີ ລັດຕະນະປັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍ່ແກ້ວ ເລກທີ 295 /ຈຂ.ບກ

ບໍ່ແກ້ວ, ວັນທີ 15.2.2024

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ແຂວງບໍ່ແກ້ວ

- ອີງຕາມ: ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ : ດຳລັດ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ສະບັບເລກທີ 631/ ລບ, ລົງວັນທີ 24 ທັນວາ 2020.
- ອີງຕາມ: ມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ສະບັບເລກທີ 10 / ສພຂ, ລົງວັນທີ 24 ມັງກອນ 2024.
- ອີງຕາມ: ໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 12/ສພຂ, ລົງວັນທີ 06 ກຸມພາ 2024.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ແມ່ນກຳນົດຫຼັກການ, ລະບຽບ ແລະ ມາດຕະການ ເພື່ອປຸກລະດົມທົ່ວສັງຄົມ ປະກອບສ່ວນວັດຖຸ-ປັດໃຈ ເຂົ້າກອງທຶນ, ສະສົມທຶນເຮັດໃຫ້ກອງທຶນມີຄວາມເຂັ້ມແຂງ ແລະ ຍືນຍົງ ທັງເປັນບ່ອນອີງໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ແລະ ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ໃນການສ້າງແຜນງານ, ຄຸ້ມຄອງ ແລະ ນຳໃຊ້ ຊ່ວຍເຫຼືອບັນເທົາທຸກຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດ ຢ່າງທົ່ວເຖິງ.

**ມາດຕາ 2 ກອງທຶນຄຸ້ມຄອງໄພພິບັດ.**

ກອງທຶນຄຸ້ມຄອງໄພພິບັດ ຂຽນຫຍໍ້ ' **ກພບ** ' ແມ່ນກອງທຶນຂອງອົງການຈັດຕັ້ງລັດ, ທີ່ສ້າງຕັ້ງຂຶ້ນເພື່ອປຸກລະດົມທຶນ ແລະ ສະສົມທຶນ ຈາກແຫຼ່ງທຶນຕ່າງໆ ແນ່ໃສ່ຮັບປະກັນໃຫ້ມີທຶນທີ່ຍືນຍົງ ເພື່ອນຳໃຊ້ເຂົ້າໃນການຊ່ວຍເຫຼືອບັນເທົາທຸກໃຫ້ແກ່ເປົ້າໝາຍຜູ້ປະສົບເຄາະຮ້າຍຈາກໄພພິບັດ, ຊຶ່ງປະກອບມີ ສອງ ຂັ້ນຄື:

1. ກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ຂຽນຫຍໍ້ ' ກພບຂ '. ຕັ້ງຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ.
2. ກອງທຶນຄຸ້ມຄອງໄພພິບັດຂັ້ນເມືອງ ຂຽນຫຍໍ້ ' ກພບມ '. ຕັ້ງຢູ່ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ.

**ມາດຕາ 3 ອະທິບາຍຄຳສັບ.**

**ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:**

1. **ກອງທຶນ** ໝາຍເຖິງ: ການສະສົມ ເງິນ ແລະ ວັດຖຸ ທີ່ໄດ້ມາຈາກຫຼາຍພາກສ່ວນ ເພື່ອຈຸດປະສົງຮັບໃຊ້ເຂົ້າໃນວຽກງານໄພພິບັດຂອງແຂວງ;

2. **ການຄຸ້ມຄອງ** ໝາຍເຖິງ: ການປົກປັກຮັກສາ ເງິນ ແລະ ວັດຖຸ ເພື່ອນຳໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍ ຕາມລະບຽບຫຼັກການ;

3. **ໄພພິບັດ** ໝາຍເຖິງ: ເຫດການທີ່ເປັນອັນຕະລາຍຮ້າຍແຮງທີ່ເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນທີ່ເປັນວົງກວ້າງ ເຊິ່ງໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ, ພື້ນຖານໂຄງລ່າງ ແລະ ການດຳລົງຊີວິດ ຂອງຄົນໃນສັງຄົມ ທັງໃນໄລຍະສັ້ນ ແລະ ໄລຍະຍາວ;

4. **ໄພພິບັດທຳມະຊາດ** ໝາຍເຖິງ: ເຫດການ, ປະກົດການ ແລະ ການປ່ຽນແປງທຳມະຊາດ ເປັນຕົ້ນໄພນ້ຳຖ້ວມ,ໄພແຫ້ງແລ້ງ, ພະຍຸ, ໄພໜາວ, ແຜ່ນດິນໄຫວ, ດິນເຈື່ອນ, ສັດຕູພືດ, ພະຍາດລະບາດ ແລະ ອື່ນໆ.

5. **ໄພພິບັດທີ່ມະນຸດສ້າງຂຶ້ນ** ໝາຍເຖິງ ເຫດການສຸກເສີນ ແລະ ອັນຕະລາຍທາງດ້ານສິ່ງແວດລ້ອມ ເນື່ອງຈາກການກະທຳຂອງມະນຸດ ເປັນຕົ້ນອັກຄີໄພ, ໄຟໄໝ້ລາມປ່າ, ຝຸ່ນລະອອງ, ກຳມັນຕະພາບລັງສີ, ສານເຄມີຮົ່ວໄຫຼ, ລະເບີດຕົກຄ້າງທີ່ບໍ່ທັນແຕກ.

6. **ການຊ່ວຍເຫຼືອສຸກເສີນ** ໝາຍເຖິງ : ການຊ່ວຍເຫຼືອບັນເທົາທຸກອັນຮີບດ່ວນ ໃນການກູ້ຊີວິດ, ຊັບສິນຂອງພົນລະເມືອງ ຊ່ວງເວລາກຳລັງປະສົບໄພພິບັດ.

7. **ການຊ່ວຍເຫຼືອຟື້ນຟູຫຼັງໄພພິບັດ** ແມ່ນການປັບປຸງຊີວິດການເປັນຢູ່ຂອງຜູ້ປະສົບໄພພິບັດ ແລະ ການບູລະນະສ້ອມແປງ, ກໍ່ສ້າງໂຄງລ່າງພື້ນຖານ ທີ່ຖືກພົນກະທົບ ຫຼື ໄດ້ຮັບຄວາມເສຍຫາຍຈາກໄພພິບັດກັບຄືນສູ່ສະພາບປົກກະຕິ ຫຼື ດີກວ່າເກົ່າ.

**ມາດຕາ 4 ນະໂຍບາຍຂອງແຂວງ.**

ແຂວງໄດ້ຖືເອົາວຽກງານກອງທຶນຄຸ້ມຄອງໄພພິບັດ ເປັນວຽກທີ່ສຳຄັນ, ເປັນເຈົ້າການໃນການວາງແຜນການ, ມາດຕະການ, ໂຄງການ, ສ້າງແຜນການຮັບມື ແລະ ຕອບໂຕ້ໄພພິບັດ ແລະ ທ່າແຮງກຽມພ້ອມດ້ານບຸກຄະລາກອນ, ຂໍ້ມູນຂ່າວສານ, ອຸປະກອນພາຫະນະ ແລະ ງົບປະມານ ເພື່ອໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຢ່າງມີປະສິດທິພາບແລະມີປະສິດທິຜົນ ຫຼຸດຜ່ອນຄວາມສ່ຽງ ຕໍ່ຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

**ມາດຕາ 5 ຫຼັກການຄຸ້ມຄອງ ແລະ ນຳໃຊ້.**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
2. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ເປີດເຜີຍ.
3. ມີການກວດກາ ແລະ ກວດສອບຢ່າງເປັນປົກກະຕິ ຕາມກົດໝາຍ.

**ມາດຕາ 6 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຊ່ວຍເຫຼືອບຸກຄົນ, ນິຕິບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງວຽກງານຄຸ້ມຄອງໄພພິບັດທົ່ວແຂວງບໍ່ແກ້ວ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນຄຸ້ມຄອງໄພພິບັດ

**ມາດຕາ 7 ແຫຼ່ງລາຍຮັບຂອງກອງທຶນຄຸ້ມຄອງໄພພິບັດ.**

1. ງົບປະມານຂອງລັດ ຕາມການຈັດສັນງົບປະມານປະຈຳປີ ຂອງແຂວງ ແລະ ເມືອງ.
2. ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ, ຄອບຄົວ, ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ມີດັ່ງນີ້:

2.1 ປະຊາຊົນທົ່ວໄປ ປະກອບສ່ວນ 5.000 ກີບ/ຕໍ່ຄອບຄົວ/ປີ, ຍົກເວັ້ນຄອບຄົວພະນັກງານທີ່ໄດ້ເສຍຢູ່ກົມກອງ ຫຼື ຫ້ອງການແລ້ວ ແລະ ຄອບຄົວທຸກຍາກທີ່ໄດ້ຮັບການຢັ້ງຢືນຈາກບ້ານ.

2.2 ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານທະນາຄານທຸລະກິດເອກະຊົນ, ພະນັກງານຂົງເຂດການສື່ສານ ( ອີທີແອລ, ຢູນີເທວ ແລະ ລາວໂທລະຄົມ ) ປະກອບສ່ວນ 20,000 ກີບ /ຄົນ/ປີ.

2.3 ພາກສ່ວນທຸລະກິດ, ວິສາຫະກິດຂອງລັດ ແລະ ເອກະຊົນ ປະກອບສ່ວນ ດັ່ງນີ້:

| | |
|---|---|
| - ບໍລິສັດມະຫາຊົນ | 500.000 ກີບ/ທະບຽນ/ປີ; |
| - ວິສະຫະກິດຫຸ້ນສ່ວນ | 400.000 ກີບ/ທະບຽນ/ປີ; |
| - ບໍລິສັດຈໍາກັດ | 200.000 ກີບ/ທະບຽນ/ປີ; |
| - ບໍລິສັດຈໍາກັດຜູ້ດຽວ | 100.000 ກີບ/ທະບຽນ/ປີ; |
| - ວິສະຫະກິດສ່ວນບຸກຄົນ | 50.000 ກີບ/ທະບຽນ/ປີ. |

2.4 ບໍລິສັດທີ່ໄດ້ຮັບໂຄງການກໍ່ສ້າງສ້ອມແປງພື້ນຖານໂຄງລ່າງທີ່ໄດ້ຮັບຜົນກະທົບຈາກໄພພິບັດ ປະກອບສ່ວນ 0.1% ຂອງມູນຄ່າການກໍ່ສ້າງທັງໝົດ.

2.5 ບັນດາໂຄງການ ທີ່ມີຄວາມສ່ຽງຕໍ່ການເກີດໄພພິບັດເປັນຕົ້ນ: ເຂື່ອນໄຟຟ້າ ແລະ ອື່ນໆ ແມ່ນຈະໄດ້ປະກອບສ່ວນ 10.000.000 ກີບ/ປີ.

2.6 ເຂດເສດຖະກິດພິເສດສາມຫຼ່ຽມຄໍາ ປະກອບສ່ວນ 20.000.000 ກີບ/ປີ.

**3. ການຊ່ວຍເຫຼືອຂອງການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;**

ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ສາມາດໃຫ້ການຊ່ວຍເຫຼືອດ້ວຍຄວາມສະມັກໃຈເປັນເງິນ ຫຼື ວັດຖຸ ແລະ ອື່ນໆ ເພື່ອສົມທົບເຂົ້າກອງທຶນຄຸ້ມຄອງໄພພິບັດ ຫຼື ໃຫ້ການຊ່ວຍເຫຼືອກຸ່ມເປົ້າໝາຍທີ່ໄດ້ຮັບຜົນກະທົບໜັກໜ່ວງຈາກໄພພິບັດຕາມຄວາມເໝາະສົມ.

**4. ການລະດົມທຶນ;**

ການລະດົມທຶນ ເປັນທຶນທີ່ໄດ້ຮັບຈາກ ການອອກແຈ້ງການຂອງການນໍາຂັ້ນແຂວງ, ຂັ້ນເມືອງ ຫຼື ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ, ຂັ້ນເມືອງ ເພື່ອລະດົມທຶນຈາກທຸກພາກສ່ວນໃນສັງຄົມ ເພື່ອຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນຊ່ວງໄລຍະກໍາລັງເກີດໄພພິບັດ ໂດຍຈະມອບເປັນເງິນສົດ ຜ່ານຄະນະກໍາມະການຄຸ້ມຄອງໄພພິບັດ ຫຼື ໂອນເຂົ້າບັນຊີເງິນຝາກກອງທຶນຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ຕາມລະບຽບການ.

**5. ດອກເບ້ຍເງິນຂອງກອງທຶນຄຸ້ມຄອງໄພພິບັດ**

ດອກເບ້ຍເງິນຝາກຂອງກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ, ຂັ້ນເມືອງ ເປັນລາຍຮັບໜຶ່ງຂອງກອງທຶນທີ່ໄດ້ມາຈາກ ການນໍາເອົາເງິນກອງທຶນຄຸ້ມຄອງໄພພິບັດ ໄປຝາກຢູ່ທະນາຄານທຸລະກິດ ທີ່ໝັ້ນຄົງ ແລະ ເຊື່ອຖືໄດ້.

**6. ລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍ:**

ລາຍຮັບອື່ນ ທີ່ຖືກຕ້ອງຕາມລະບຽບກົດໝາຍ ເປັນລາຍຮັບ ຈາກການຈັດກິດຈະກໍາ ລະດົມທຶນເຂົ້າກອງທຶນຄຸ້ມຄອງໄພພິບັດ ໃນຮູບແບບໃດໜຶ່ງ ທີ່ໄດ້ຮັບການອານຸມັດຈາກຂັ້ນເທິງ ແລະ ຄະນະກໍາມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**ມາດຕາ 8 ວິທີການ ແລະ ຂັ້ນຕອນ ການມອບເງິນເຂົ້າກອງທຶນ.**

**1. ສໍາລັບຂັ້ນບ້ານ:** ໃຫ້ອໍານາດການປົກຄອງບ້ານ ເປັນຜູ້ລະດົມການປະກອບສ່ວນນໍາປະຊາຊົນ ພາຍໃນບ້ານຂອງຕົນເລີ່ມແຕ່ຕົ້ນເດືອນກຸມພາ ເປັນຕົ້ນໄປ ແລ້ວສະຫຼຸບຈໍານວນເງິນ ໃຫ້ສໍາເລັດ **ກ່ອນວັນທີ 10 ເມສາຂອງທຸກໆປີ** ແລ້ວມາມອບໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເພື່ອມອບເຂົ້າກອງທຶນຄຸ້ມ

ຄອງໄພພິບັດຂັ້ນເມືອງ ພາຍຫຼັງສຳເລັດແລ້ວກອງເລຂາ ຕ້ອງສະຫຼຸບລາຍງານໃຫ້ສະພາບໍລິຫານກອງທຶນຂັ້ນເມືອງ ກ່ອນວັນທີ 20 ເມສາຂອງທຸກໆປີ.

**2. ສຳລັບຂັ້ນເມືອງ:** ໃຫ້ໜ່ວຍງານການເງິນຂອງຫ້ອງການ ທີ່ສັງກັດຢູ່ບັນດາຫ້ອງການອ້ອມຂ້າງເມືອງ ເປັນຜູ້ສັງລວມ ຈຳນວນເງິນການປະກອບສ່ວນຂອງ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ເລີ່ມແຕ່ ເດືອນກຸມພາເປັນຕົ້ນໄປ ແລ້ວໂອນເງິນດັ່ງກ່າວ ເຂົ້າກອງທຶນຄຸ້ມຄອງໄພພິບັດຂັ້ນເມືອງ ທີ່ເປີດບັນຊີໄວ້ຄັງເງິນປະຈຳເມືອງ ຈຳນວນ 70% ແລະ ມອບເຂົ້າກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ຈຳນວນ 30% ຂອງເງິນທີ່ຈັດເກັບໄດ້ທັງໝົດ ໃຫ້ສຳເລັດກ່ອນ ວັນທີ 10 ເມສາ ຂອງທຸກປີ ພາຍຫຼັງສຳເລັດແລ້ວກອງເລຂາ ຕ້ອງສະຫຼຸບລາຍງານໃຫ້ສະພາບໍລິຫານກອງທຶນເມືອງ ກ່ອນວັນທີ 20 ເມສາຂອງທຸກໆປີ ແລະ ສະຫຼຸບ ລາຍງານໃຫ້ສະພາບໍລິຫານກອງທຶນ ຄຸ້ມຄອງໄພພິບັດແຂວງ ກ່ອນວັນທີ 30 ເມສາ ຂອງທຸກໆປີ.

**3. ສຳລັບຂັ້ນແຂວງ:** ໃຫ້ຂະແໜງ ຫຼື ຫ້ອງການການເງິນປະຈຳຢູ່ພະແນກການ, ກົມກອງ, ຂົງເຂດຕ່າງໆ ອ້ອມຂ້າງແຂວງ ເປັນຜູ້ສັງລວມ ຈຳນວນເງິນ ການປະກອບສ່ວນຂອງພະນັກງານ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານຂົງເຂດທະນາຄານ, ຂົງເຂດການສື່ສານ ເລີ່ມແຕ່ ເດືອນກຸມພາ ເປັນຕົ້ນໄປ ແລ້ວໂອນເງິນດັ່ງກ່າວ ເຂົ້າກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ທີ່ເປີດບັນຊີໄວ້ຄັງເງິນປະຈຳແຂວງ ໃຫ້ສຳເລັດກ່ອນ ວັນທີ 10 ເມສາ ຂອງທຸກປີ.

**4. ສຳລັບບໍລິສັດ** ທີ່ໄດ້ຮັບໂຄງການກໍ່ສ້າງ ສ້ອມແປງພື້ນຖານໂຄ່ງລ່າງທີ່ໄດ້ຮັບຜົນກະທົບຈາກໄພພິບັດ ແລະ ບັນດາໂຄງການທີ່ມີຄວາມສ່ຽງຕໍ່ການເກີດໄພພິບັດ ໃຫ້ກອງເລຂາ ປະສານສົມທົບກັບບໍລິລັດ ຫຼື ໂຄງການດັ່ງກ່າວ ໂດຍຜ່ານການເງິນ-ການບັນຊີຂອງບໍລິສັດ ໃນການໂອນມອບ ຈຳນວນເງິນການປະກອບສ່ວນເຂົ້າກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ທີ່ເປີດບັນຊີຢູ່ຄັງເງິນປະຈຳແຂວງ ໃຫ້ສຳເລັດກ່ອນ ວັນທີ 10 ເມສາ ຂອງທຸກປີ.

**5.** ພາກສ່ວນທຸລະກິດ, ວິສາຫະກິດຂອງລັດ ແລະ ເອກະຊົນ ທີ່ປະກອບສ່ວນເງິນເຂົ້າກອງທຶນ ໂດຍຈະມອບເປັນເງິນສົດ ຜ່ານຄະນະກຳມະການຄຸ້ມຄອງໄພພິບັດ ຫຼື ໂອນເຂົ້າບັນຊີເງິນຝາກກອງທຶນຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ຕາມລະບຽບການ ໃຫ້ສຳເລັດກ່ອນ ວັນທີ 10 ເມສາ ຂອງທຸກປີ.

**6.** ສະເພາະເຂດເສດຖະກິດພິເສດແຂວງບໍ່ແກ້ວ ແມ່ນມອບໃຫ້ການເງິນຄະນະຄຸ້ມຄອງເຂດເສດຖະກິດພິເສດ ແຂວງບໍ່ແກ້ວ ເປັນຜູ້ຈັດເກັບ ແລ້ວມອບໂອນເງິນດັ່ງກ່າວເຂົ້າກອງທຶນໄພພິບັດຂັ້ນແຂວງ ທີ່ເປີດບັນຊີໄວ້ຄັງເງິນປະຈຳແຂວງ ໃຫ້ສຳເລັດກ່ອນ ວັນທີ 10 ເມສາ ຂອງທຸກໆປີ.

- ພາຍຫຼັງສຳເລັດ ກອງເລຂາສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ຕ້ອງສະຫຼຸບລາຍງານສະພາບໍລິຫານກອງທຶນ ແລະ ລາຍງານປະທານກຳມະການຄຸ້ມຄອງໄພຂັ້ນແຂວງ **ກ່ອນວັນທີ 10 ພຶດສະພາ ຂອງທຸກໆປີ.**

**ມາດຕາ 9 ການຄຸ້ມຄອງກອງ ແລະ ການນຳໃຊ້ກອງທຶນ.**

**1. ການຄຸ້ມຄອງກອງທຶນ.**

- ການຄຸ້ມຄອງ ກອງທຶນຂັ້ນແຂວງ, ເມືອງ ແມ່ນເປີດບັນຊີຢູ່ທະນາຄານທຸລະກິດໃດໜຶ່ງ ແລະ ເປີດບັນຊີຢູ່ຄັງເງິນປະຈຳແຂວງ ແລະ ຄັງເງິນປະຈຳເມືອງ;
- ວັດຖຸກອງທຶນ ຕ້ອງເກັບມ້ຽນ ຜ່ານລະບົບສາງ ໂດຍມີບັນຊີຕິດຕາມ ການຮັບ-ຈ່າຍອອກສາງ, ຮັບປະກັນບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ເບີກຈ່າຍແຈກຢາຍໃຫ້ທັນກັບສະພາບການ;
- ການຖອນເງິນກອງທຶນຄຸ້ມຄອງໄພພິບັດ ແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸຍາດຈາກປະທານຄະນະກຳມະການຄຸ້ມຄອງແຕ່ລະຂັ້ນ ບົນພື້ນຖານການສະເໜີ ຂອງສະພາບໍລິຫານກອງທຶນ ຫຼື ຜູ້ຖືກມອບສິດ;
- ການຖອນເງິນຈາກບັນຊີເງິນຝາກກອງທຶນ ແຕ່ລະຄັ້ງ ຕ້ອງບໍ່ໃຫ້ເກີນ ເຈັດສິບສ່ວນຮ້ອຍ (70%) ໂດຍຕ້ອງໃຫ້ມີເງິນແຮໄວ້ ສາມສິບສ່ວນຮ້ອຍ (30%) ຂອງເງິນກອງທຶນທັງໝົດທີ່ຢູ່ໃນບັນຊີເງິນຝາກ.
- ການເບີກຈ່າຍວັດຖຸສິ່ງຂອງກອງທຶນ ແຕ່ລະຄັ້ງຕ້ອງມີການຢັ້ງຢືນ ການຮັບເຄື່ອງ ແລະ ນຳສົ່ງເຄື່ອງຕາມແບບພິມຂອງກະຊວງແຮງງານ ແລະ ສະຫັວດດີການສັງຄົມ.

2. ການນຳໃຊ້ກອງທຶນ:

ກອງທຶນຄຸ້ມຄອງໄພພິບັດນຳໃຊ້ເຂົ້າໃນເປົ້າໝາຍດັ່ງນີ້:

1. ການຊ່ວຍເຫຼືອສຸກເສີນ.

ແມ່ນນຳໃຊ້ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກອງທຶນ ຄຸ້ມຄອງໄພພິບັດ ສະບັບເລກທີ 04/ ຄພສ ລົງວັນທີ 2 ມີນາ 2022 ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານ ຫຼື ຊ່ວຍເຫຼືອຕາມຄວາມເໝາະສົມ ແລະ ຕາມການຕົກລົງເຫັນດີຂອງປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ.

2. ການຊ່ວຍເຫຼືອຟື້ນຟູ.

ແມ່ນປະຕິບັດຕາມຂໍ້ຕົກລົງວ່າດ້ວຍກອງທຶນຄຸ້ມຄອງໄພພິບັດແຂວງບໍ່ແກ້ວ.

3. ບໍລິຫານວຽກງານປົກກະຕິ ຂອງສະພາບໍລິຫານ.

ກອງເລຂາຂອງສະພາບໍລິຫານ ເຮັດໜ້າທີ່ ຕາມມາດຕາ 5 ຂອງຂໍ້ຕົກລົງ ສະບັບເລກທີ 04/ ຄພສ ລົງວັນທີ 2 ມີນາ 2022 ໃນການຂື້ນແຜນການໃຊ້ຈ່າຍຕົວຈິງຂອງສະພາບໍລິຫານ ເພື່ອສະເໜີຂໍອະນຸມັດຈາກ ຄະນະກຳມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ໃນແຕ່ລະປີ.

## ມາດຕາ 10 ການປະຕິບັດລາຍຮັບ-ລາຍຈ່າຍ.

ການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ເງິນກອງທຶນ ແມ່ນໃຫ້ປະຕິບັດ ຈົດຮັບ-ຈົດຈ່າຍ ຕາມລະບຽບກົດໝາຍ ຂອງກະຊວງການເງິນ ວາງອອກໃນແຕ່ລະໄລຍະ.

## ມາດຕາ 11 ສິດໃນການສັ່ງຈ່າຍ.

ຜູ້ມີສິດໃນການສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດ ມີດັ່ງນີ້:

1. ຂັ້ນແຂວງ ແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ຫຼື ຜູ້ຖືກມອບສິດ;
2. ຂັ້ນເມືອງ ແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ຫຼື ຜູ້ຖືກມອບສິດ.

ໃນກໍລະນີສຸກເສີນ ຫົວໜ້າກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດ ສາມາດສັ່ງຈ່າຍເງິນກອງທຶນໂດຍກົງເຂົ້າໃນການຊ່ວຍເຫຼືອ, ແຕ່ຕ້ອງຂໍທິດຊີ້ນຳ ແລະ ລາຍງານ ປະທານ ຫຼື ຮອງປະທານ ໂດຍທັນທີ.

## ມາດຕາ 12 ການປະກອບເອກະສານ ແລະ ການຢັ້ງຢືນ ຂໍການຊ່ວຍເຫຼືອສົງເຄາະ.

1. ຄຳຮ້ອງຂອງຜູ້ປະສົບເຄາະຮ້າຍ ຫຼື ຜູ້ຕາງໜ້າ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້ ໂດຍມີການຢັ້ງຢືນ ຈາກອຳນາດການປົກຄອງບ້ານ ເພື່ອນຳສະເໜີ ຫ້ອງການແຮງງານ ແລະສະຫວັດດີການສັງຄົມເມືອງ.
2. ຕາຕະລາງ ເກັບກຳຂໍ້ມູນ ພົນເສຍຫາຍ ຂອງຄະນະຮັບຜິດຊອບ ຈາກເຫດການໄພພິບັດ
3. ຮູບພາບຈາກເຫດການໄພພິບັດທີ່ເກີດຂື້ນ.
4. ໃບຢັ້ງຢືນການເສຍຊີວິດ ຈາກອຳນາດການປົກຄອງບ້ານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນກໍລະນີທາກເສຍຊີວິດ.

## ມາດຕາ 13 ການປະກອບເອກະສານຖອນເງິນກອງທຶນ.

1. ໜັງສືສະເໜີ ຂອງຫ້ອງການ ແຮງງານ ແລະ ສະຫວັດດີການສັງຄົມເມືອງ ຢັ້ງຢືນຈາກຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ເຖິງປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ເພື່ອຂໍຖອນເງິນກອງທຶນ;

2. ໃນກໍລະນີ ເງິນກອງທຶນຄຸ້ມຄອງໄພພິບັດຂັ້ນເມືອງ ບໍ່ພຽງພໍ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ຕ້ອງໄດ້ເຮັດໜັງສືສະເໜີ ເຖິງປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ໂດຍໄດ້ຮັບການຢັ້ງຢືນຈາກຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ແລະ ພ້ອມທັງເຊັນຜ່ານທ່ານເຈົ້າເມືອງ.

## ໝວດທີ 3
## ເປົ້າໝາຍ ແລະ ຮູບການຊ່ວຍເຫຼືອ

**ມາດຕາ 14 ເປົ້າໝາຍຜູ້ທີ່ໄດ້ຮັບການຊ່ວຍເຫຼືອ.**

ບຸກຄົນ, ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຖືກຕ້ອງຕາມກົດໝາຍ ຢູ່ແຂວງບໍ່ແກ້ວ ທີ່ປະສົບເຄາະຮ້າຍຈາກໄພພິບັດ.

**ມາດຕາ 15 ຮູບແບບການຊ່ວຍເຫຼືອ**

**ຮູບການຊ່ວຍເຫຼືອ ແມ່ນໄດ້ອີງຕາມຂໍ້ກົລົງ ຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ສະບັບເລກທີ 04/ຄພສ,ລົງວັນທີ 02 ມີນາ 2022 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກອງທຶນໄພພິບັດ ( ມາດຕາ 6 ) ເຊິ່ງການຊ່ວຍເຫຼືອປະກອບມີ 2 ວິທີຄື: ການຊ່ວຍເຫຼືອສຸກເສີນ ແລະ ການຊ່ວຍເຫຼືອຟື້ນຟູຫຼັງໄພພິບັດ.**

1. ຊ່ວຍເຫຼືອສຸກເສີນ ແມ່ນການຊ່ວຍເຫຼືອໂດຍທັນທີ ໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດ ທີ່ເກີດຂຶ້ນໃຫ້ທັນກັບເວລາ ເປັນຕົ້ນ: ບ່ອນຢູ່ອາໄສຊົ່ວຄາວ, ເຂົ້າສານ, ອາຫານ, ນ້ຳດື່ມ, ເຄື່ອງນຸ່ງຫົ່ມ ແລະ ອື່ນໆ ທີ່ຈຳເປັນ.

2. ການຊ່ວຍເຫຼືອຟື້ນຟູຫຼັງໄພພິບັດ ແມ່ນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກໄພພິບັດ ຕາມລະບຽບຫຼັກການ ຫຼັງໄດ້ຮັບຂໍ້ມູນຜົນເສຍຫາຍຢ່າງລະອຽດຈາກພາກສ່ວນທີ່ກ່ຽວຂ້ອງ ຄິດໄລ່ເປັນອຸປະກອນສິມທົບປຸກສ້າງ ດັ່ງນີ້:

**2.1. ເຮືອນທີ່ໄດ້ຮັບຜົນກະທົບຈາກໄພພິບັດ ໂດຍບໍ່ສາມາດອາໄສຢູ່ໄດ້ ຈະໄດ້ຮັບການຊ່ວຍເຫຼືອດັ່ງນີ້:**

- **ຄອບຄົວນ້ອຍ** ຈຳນວນຄົນ **1-4 ຄົນ** ຈະໄດ້ຮັບສັງກະສີ ຈຳນວນ 40 ແຜ່ນ ແລະ ເຫຼັກຕະປູ ຈຳນວນ 10 ກິໂລ/ຄອບຄົວ ( ອີງຕາມຂໍ້ຕົກລົງ ເລກທີ 04/ຄພສ ) ແລະ ກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ແມ່ນຈະໄດ້ມອບເງິນສົດ ຈຳນວນ **1.000.000 ກີບ.**

- **ຄອບຄົວກາງ** ຈຳນວນຄົນ **5-7 ຄົນ** ຈະໄດ້ຮັບສັງກະສີ ຈຳນວນ 50 ແຜ່ນ ແລະ ເຫຼັກຕະປູ ຈຳນວນ 15 ກິໂລ/ຄອບຄົວ ( ອີງຕາມຂໍ້ຕົກລົງ ເລກທີ 04/ຄພສ ) ແລະ ກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ແມ່ນຈະໄດ້ມອບເງິນສົດ ຈຳນວນ **1.500.000 ກີບ.**

- **ຄອບຄົວໃຫຍ່** ຈຳນວນຄົນ **8 ຄົນຂຶ້ນໄປ** ຈະໄດ້ຮັບສັງກະສີ ຈຳນວນ 60 ແຜ່ນ ແລະ ເຫຼັກຕະປູ ຈຳນວນ 20 ກິໂລ/ຄອບຄົວ ( ອີງຕາມຂໍ້ຕົກລົງ ເລກທີ 04/ຄພສ ) ແລະ ກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ແມ່ນຈະໄດ້ມອບເງິນສົດ ຈຳນວນ **2.000.000 ກີບ.**

2.2. ນາ, ໄຮ່, ແລະ ເລົ້າເຂົ້າ ໄດ້ຮັບຜົນກະທົບຈາກໄພພິບັດ ທີ່ມີມູນຄ່າຄວາມເສຍຫາຍ ແຕ່ 60% ຂອງເນື້ອທີ່ທັງໝົດ, ໂດຍຂາດສະບຽງອາຫານລ້ຽງຊີບ ຈະໄດ້ຮັບການຊ່ວຍເຫຼືອ ເປັນເຂົ້າສານ 12 ກິໂລ/ຄົນ/ເດືອນ ສູງສຸດບໍ່ເກີນ 3 ເດືອນ. ( ໃນກໍລະນີຄອບຄົວທີ່ໄດ້ຮັບຜົນກະທົບ ແຕ່ 60% ຂຶ້ນໄປ ແຕ່ສາມາດກຸ້ມກິນທາງດ້ານສະບຽງອາຫານ ແມ່ນຈະໄດ້ຮັບການຊ່ວຍເຫຼືອ 12 ກິໂລ/ຄົນ/ 1 ເດືອນ ເທົ່ານັ້ນ ).

2.3. ມີຜູ້ເສຍຊີວິດຈາກໄພພິບັດ ຈະໄດ້ຮັບການຊ່ວຍເຫຼືອເງິນຊາປະນາກິດສົບ ຈຳນວນ **1,500,000 ກີບ/ຄົນ** ( ອີງຕາມຂໍ້ຕົກລົງ ເລກທີ 04/ຄພສ ) ແລະ ກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ແມ່ນຈະໄດ້ມອບເງິນສົດ ຈຳນວນ **1.000.000 ກີບ/ຄົນ.**

## ໝວດທີ4
## ໂຄງປະກອບບຸກຄະລາກອນ, ສິດ
## ແລະ ໜ້າທີ່ ຂອງຄະນະສະພາບໍລິຫານກອງທຶນຄຸ້ມຄອງກອງທຶນໄພພິບັດ

**ມາດຕາ 16 ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ.**

ສະພາບໍລິຫານກອງທຶນ ແມ່ນການຈັດຕັ້ງສູງສຸດຂອງກອງທຶນ ຮັບຜິດຊອບການເຄື່ອນໄຫວຂອງວຽກງານກອງທຶນ;

ສະພາບໍລິຫານກອງທຶນ ປະກອບດ້ວຍ ປະທານ, ຮອງທານ ແລະ ກຳມະການ ຈຳນວນໜຶ່ງທີ່ມາຈາກຂະແໜງການກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງ ໂດຍປະທານຄະນະກຳມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ.

**ມາດຕາ 17 ໂຄງປະກອບສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ.**

**ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ ປະກອບດ້ວຍ:**

1. ຫົວໜ້າພະແນກແຮງງານ ແລະສະຫວັດດີການສັງຄົມແຂວງ ເປັນປະທານ;
2. ຮອງຫົວໜ້າຫ້ອງວ່າການແຂວງ ເປັນຮອງປະທານ;
3. ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ເປັນກຳມະການ;
4. ຮອງຫົວໜ້າພະແນກການເງິນແຂວງ ເປັນກຳມະການ;
5. ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນກຳການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 18 ສິດ ແລະ ໜ້າທີ່ ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ.**

ສະພາບໍລິຫານກອງທຶນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງບໍລິຫານ ກອງທຶນຄຸ້ມຄອງໄພພິບັດ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແຜນຍຸດທະສາດ, ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ, ລະບຽບການຂອງກອງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ.
2. ພິຈາລະນາ ແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວວຽກງານປະຈຳປີຂອງກອງທຶນ ເພື່ອນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ຕົກລົງ ແລະ ຮັບຮອງເອົາ.
3. ລະດົມຂົນຂວາຍ ແລະຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ, ສັງຄົມ, ອົງການຈັດຕັ້ງທັງພາຍໃນ ແລະຕ່າງປະເທດ ເພື່ອປະກອບສ່ວນເຂົ້າກອງທຶນ.
4. ຄົ້ນຄ້ວາ ແລະ ສ້າງລະບຽບການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ກອງກອງທຶນຄຸ້ມຄອງໄພພິບັດ.
5. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງກອງເລຂາກອງທຶນ.
6. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິພາບສູງ.
7. ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ທຸກເດືອນ ແລະ ໜຶ່ງ ປີ.
8. ລາຍງານໃຫ້ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ແຕ່ລະໄລຍະຢ່າງເປັນປົກກະຕິ.
9. ຮັບຮອງບົດລາຍງານຜົນການກວດສອບ ດ້ານການເງິນຂອງກອງທຶນ.

10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ຕາມການມອບໝາຍຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ.

**ມາດຕາ 19 ກອງເລຂາສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ.**

ກອງເລຂາ ປະກອບມີບັນດາທ່ານດັ່ງນີ້:

1. ຮອງຫົວໜ້າພະແນກແຮງ ແລະ ສະຫວັດດີການສັງຄົມແຂວງ ເປັນຫົວໜ້າ;
2. ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກ ຮສສ ແຂວງ ເປັນຮອງ;
3. ຫົວໜ້າຂະແໜງງົບປະມານ, ພະແນກການເງິນແຂວງ ເປັນກຳມະການ;
4. ວິຊາການຂະແໜງສັງຄົມສົງເຄາະ, ພະແນກ ຮສສ ແຂວງ ເປັນກຳມະການ;
5. ວິຊາການການເງິນ, ພະແນກ ຮສສ ແຂວງ
   ເປັນກຳມະການ;

**ມາດຕາ 20 ສິດ ແລະ ໜ້າທີ່ ກອງເລຂາ ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ.**

ກອງເລຂາ ສະພາກອງທຶນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນປະຈຳ ທຶກເດືອນ ແລະ ປະຈຳປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາ ຮັບຮອງເອົາ ແລະ ສະເໜີຄະນະກຳມະການຄຸ້ມຄອງໄພພິບັດອະນຸມັດ.
2. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈຳວັນ ຂອງກອງທຶນ ໂດຍສອດຄ່ອງກັບແຜນການດ້ວຍຄວາມໂປ່ງໃສ ແລະ ມີປະສິດທິພາບ.
3. ສ້າງລະບຽບພາຍໃນຂອງກອງທຶນ ເພື່ອສະເໜີຕໍ່ສະພາບໍລິຫານ.
4. ຈັດຕັ້ງກິດຈະກຳ ຊອກຫາແຫຼ່ງທຶນເພື່ອລະດົມທຶນເຂົ້າກອງທຶນ.
5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງກອງທຶນ.
6. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການຂອງສະພາບໍລິຫານກອງທຶນໄດ້ຮັບຮອງ.
7. ຕິດຕາ, ກວດກາປະເມີນຜົນການນຳໃຊ້ກອງທຶນ.
8. ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ ຢ່າງເປັນປົກກະຕິ.
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການປະກອບສ່ວນເງິນ ຫຼື ວັດຖຸ ເຂົ້າກອງທຶນ ໃນແຕ່ລະປີໃຫ້ເປັນປົກກະຕິ.
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ຕາມການມອບໝາຍຂອງສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ.

**ມາດຕາ 21 ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ.**

ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດຂັ້ນເມືອງ ແມ່ນການຈັດຕັ້ງສູງສຸດຂອງກອງທຶນຂັ້ນເມືອງ ຮັບຜິດຊອບທຸກການເຄື່ອນໄຫວວຽກງານກອງທຶນ.

ສະພາບໍລິຫານກອງທຶນ ປະກອບດ້ວຍ ປະທານ, ຮອງທານ ແລະ ກຳມະການ ຈຳນວນໜຶ່ງທີ່ມາຈາກຂະແໜງການກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງ ໂດຍປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ.

**ມາດຕາ 22 ໂຄງປະກອບສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ.**

**ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດຂັ້ນເມືອງ ປະກອບດ້ວຍ:**

1. ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນປະທານ;
2. ຮອງຫົວໜ້າຫ້ອງວ່າການເມືອງ ເປັນຮອງປະທານ;
3. ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນເມືອງ ເປັນກຳມະການ;
4. ຮອງຫົວໜ້າຫ້ອງການ ການເງິນເມືອງ ເປັນກຳມະການ;
5. ຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນກຳມະການ; ທັງເປັນຫົວໜ້າກອງເລຂາ.

**ມາດຕາ 23 ສິດ ແລະ ໜ້າທີ່ ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ.**

ສະພາບໍລິຫານກອງທຶນຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງບໍລິຫານ ກອງທຶນຄຸ້ມຄອງໄພພິບັດ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແຜນຍຸດທະສາດ, ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ, ລະບຽບການຂອງກອງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ.
2. ພິຈາລະນາແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວວຽກງານປະຈຳປີຂອງກອງທຶນ ເພື່ອນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ຕົກລົງ ແລະ ຮັບຮອງເອົາ.
3. ລະດົມຂົນຂວາຍ ແລະຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ, ສັງຄົມ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າກອງທຶນ.
4. ຄົ້ນຄ້ວາ ແລະ ສ້າງລະບຽບການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ກອງກອງທຶນຄຸ້ມຄອງໄພພິບັດ.
5. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງກອງເລຂາກອງທຶນ.
6. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິພາບສູງ.
7. ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ທຸກເດືອນ ແລະ ໜຶ່ງ ປີ.
8. ລາຍງານໃຫ້ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ແຕ່ລະໄລຍະຢ່າງເປັນປົກກະຕິ.
9. ຮັບຮອງບົດລາຍງານຜົນການກວດສອບ ດ້ານການເງິນຂອງກອງທຶນ.
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ຕາມການມອບໝາຍຂອງຄະນະກຳມະການຄຸມຄອງໄພພິບັດຂັ້ນເມືອງ.

**ມາດຕາ 24 ກອງເລຂາສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ.**

ກອງເລຂາ ສະພາບໍລິຫານກອງທຶນຂັ້ນເມືອງ ເຄື່ອນໄຫວວຽກງານ ພາຍໃຕ້ການຊີ້ນຳຂອງສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດຂັ້ນເມືອງ ປະກອບມີ ດັ່ງນີ້:

1. ຮອງຫົວຫ້ອງການແຮງ ແລະ ສະຫວັດດີການສັງຄົມເມືອງ ເປັນຫົວໜ້າ;
2. ຫົວໜ້າ ໜ່ວຍງານສະຫວັດດີການສັງຄົມ, ຫ້ອງການ ຮສສ ເມືອງ ເປັນຮອງ;
3. ຫົວໜ້າໜ່ວຍງານງົບປະມານ, ຫ້ອງການ ການເງິນເມືອງ ເປັນກຳມະການ;
4. ວິຊາການ ໜ່ວຍງານສະຫວັດດີການສັງຄົມ, ຫ້ອງການ ຮສສ ເມືອງ ເປັນກຳມະການ;
5. ວິຊາການ ໜ່ວຍງານການເງິນ, ຫ້ອງການ ຮສສ ເມືອງ ເປັນກຳມການ;

**ມາດຕາ 25 ສິດ ແລະ ໜ້າທີ່ ກອງເລຂາສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ.**

ກອງເລຂາ ສະພາບໍລິຫານກອງທຶນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂື້ນແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນ ປະຈຳ ທຸກເດືອນ ແລະ ປະຈຳປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາ ຮັບຮອງເອົາ ແລະ ສະເໜີ ຄະນະກຳມະການຄຸ້ມຄອງໄພພິບັດອະນຸມັດ.
2. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈຳວັນ ຂອງກອງທຶນ ໂດຍສອດຄ່ອງກັບແຜນການ ດ້ວຍຄວາມໂປ່ງໃສ ແລະ ມີປະສິດທິພາບ.
3. ສ້າງລະບຽບພາຍໃນຂອງກອງທຶນ ເພື່ອສະເໜີຕໍ່ສະພາບໍລິຫານ.
4. ຈັດຕັ້ງກິດຈະກຳ ຊອກຫາແຫຼ່ງທຶນເພື່ອລະດົມທຶນເຂົ້າກອງທຶນ.
5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງກອງທຶນ.
6. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການຂອງສະພາ ບໍລິຫານກອງທຶນໄດ້ຮັບຮອງ.
7. ຕິດຕາ, ກວດກາປະເມີນຜົນການນຳໃຊ້ກອງທຶນ.
8. ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ ຢ່າງເປັນປົກກະຕິ.
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການປະກອບສ່ວນເງິນ ຫຼື ວັດຖຸ ເຂົ້າກອງທຶນ ໃນແຕ່ລະ ປີໃຫ້ເປັນປົກກະຕິ.
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ຕາມການມອບໝາຍຂອງສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ.

**ມາດຕາ 26 ກອງປະຊຸມສະພາບໍລິຫານ.**

ກອງປະຊຸມຂອງສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ປະກອບມີກອງປະຊຸມສາມັນ ແລະ ວິສາມັນ:

- ກອງປະຊຸມສາມັນ ຂອງສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ຈັດຂຶ້ນ ປີ ລະ ສອງ ເທື່ອ ເພື່ອຜ່ານບົດ ສະຫຼຸບການຈັດຕັ້ງປະຕິບັດ ການຊ່ວຍເຫຼືອສຸກເສີນ ແລະ ຊ່ວຍເຫຼືອຟື້ນຟູ ໃຫ້ແກ່ຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດ ລາຍຮັບ ແລະ ລາຍຈ່າຍຂອງກອງທຶນ ໃນໄລຍະ 6 ເດືອນ ແລະ 1 ປີ ແລະ ທິດທາງແຜນການປີຕໍ່ໜ້າ.
- ໃນກໍລະນີຮີບດ່ວນ ມີບັນຫາສຳຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດ ກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມ ຂອງປະທານສະພາບໍລິຫານກອງທຶນ ຫຼື ຕາມການສະເໜີ ຂອງສະມາຊິກສະພາບໍລິຫານແຕ່ສາມທ່ານຂຶ້ນໄປ ຫຼື ຕາມການຕົກລົງເຫັນດີຂອງປະທານຄະນະກຳມະການຄຸ້ມຄອງ ໄພພິບັດຂັ້ນແຂວງ. ກອງປະຊຸມຈະເປີດຂຶ້ນໄດ້ ກໍ່ຕໍ່ເມື່ອ ມີສະມາຊິກສະພາບໍລິຫານເຂົ້າຮ່ວມ ຢ່າງໜ້ອຍ ສອງ ສ່ວນ ສາມ ຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ.

## ໝວດທີ 5
## ບັນຊີຂອງກອງທຶນ, ການກວດສອບ ແລະ ລະບອບການລາຍງານ

**ມາດຕາ 27 ບັນຊີຂອງກອງທຶນ.**

ກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ, ຂັ້ນເມືອງ ຕ້ອງມີລະບົບບັນຊີ ທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍ ການບັນຊີ ແລະ ສາມາດເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ ໂດຍຜ່ານ ການເຫັນດີຂອງຄັງເງິນປະຈຳແຂວງ ແລະ ຄັງເງິນປະຈຳເມືອງ.

**ມາດຕາ 28 ການກວດສອບບັນຊີ.**

ບັນຊີກອງທຶນຄຸ້ມຄອງໄພພິບັດ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອົງການກວດສອບແຫ່ງລັດ. ຜົນການກວດສອບ ຕ້ອງລາຍງານໃຫ້ປະທານຄະນະກຳມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ແລະ ຖືກພິມເຜີຍແຜ່ໃຫ້ສາທາລະນະຊົນຮັບຊາບ ຕາມການອະນຸຍາດຈາກຄະນະກຳມະການກອງທຶນຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**ມາດຕາ 29 ການລາຍງານ.**

ກອງເລຂາກອງທຶນຄຸ້ມຄອງໄພພິບັດແຕ່ລະຂັ້ນ ຕ້ອງສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກອງທຶນໃຫ້ສະພາບໍລິຫານກອງທຶນຂັ້ນຂອງຕົນ ປະຈຳເດືອນ, ໄຕມາດ ແລະ ປີ ຢ່າງເປັນປົກກະຕິ.

## ໝວດທີ 6
## ການກວດກາກອງທຶນ

**ມາດຕາ 30 ການກວດກາ.**

ການກວດກາ ແມ່ນການປະເມີນຜົນການນຳໃຊ້ກອງທຶນ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ ປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ອົງການກວດກາມີອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ**

1. ອົງການກວດກາພາຍໃນ: ແມ່ນອົງການດຽວກັນກັບຄະນະຮັບຜິດຊອບຄຸ້ມຄອງກອງທຶນ ແລະ ພາບໍລິຫານ.
2. ອົງການກວດກາພາຍນອກ ປະກອບມີ:
    1. ສະພາປະຊາຊົນແຂວງ;
    2. ອົງການກວດສອບ ປະຈຳພາກເໜືອ;
    3. ຄະນະກວດກາ ລັດ ຂັ້ນແຂວງ ແລະ ຂັ້ນເມືອງ;
    4. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ມວນຊົນຂັ້ນແຂວງ ແລະ ຂັ້ນເມືອງ.

**ມາດຕາ 31 ເນື້ອໃນການກວດກາກອງທຶນ.**

**ການກວດກາກອງທຶນມີເນື້ອໃນຕົ້ນຕໍ ດັ່ງນີ້:**

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບກອງທຶນ.
2. ແຫຼ່ງລາຍຮັບຂອງກອງທຶນ, ແຜນລາຍຈ່າຍ ການຈັດຕັ້ງປະຕິບັດ ແລະ ງົບປະມານຄຸ້ມຄອງບໍລິຫານກອງທຶນ.
3. ການຈັດຕັ້ງປະຕິບັດວຽກງານ ຂອງກອງເລຂາກອງທຶນ ແລະການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 32 ຮູບແບບການກວດກາກອງທຶນ.**

ການກວດກາກອງທຶນຄຸ້ມຄອງໄພພິບັດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນຈຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.
3. ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ

ໃນການດຳເນີນການກວດກາ ເຈົ້າໜ້າທີ່ກວດກາຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

# ໝວດທີ 7
# ຂໍ້ຫ້າມ

**ມາດຕາ 33 ຂໍ້ຫ້າມທົ່ວໄປ.**

ຫ້າມ ບຸກຄົນ, ນິຕິບຸກ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຳລາຍ ຫຼື ປ່ຽນແປງ ສະພາບ ທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຈະພາໃຫ້ເກີດໄພພິບັດ.
2. ສວຍໂອກາດຮັບການບໍລິຈາກດ້ວຍຮູບການຕ່າງໆ.
3. ລະດົມການບໍລິຈາກໂດຍບໍ່ໄດ້ຮັບອະນຸຍາດ.
4. ໃຊ້ຄວາມຮຸນແຮງ, ທຳລາຍ, ລັກສິ່ງຂອງ ຜູ້ປະສົບໄພພິບັດ.
5. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ການຮ່ວມມື ໃນວຽກງານຄຸ້ມຄອງໄພພິບັດ.
6. ເຜີຍແຜ່, ລາຍງານ ຫຼື ໃຫ້ຂໍ້ມູນ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ໃຫ້ຂໍ້ມູນເທັດ.
7. ໃຫ້ ຫຼື ຮັບ ສິນບົນ, ສໍ້ໂກງຊັບ ຫຼື ຍັກຍອກຊັບ.
8. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ.
9. ບໍລິຈາກເຄື່ອງບໍລິໂພກ ລວມທັງຢາປົວພະຍາດ ທີ່ໝົດອາຍຸການນຳໃຊ້ ແລະ ເຄື່ອງອຸປະໂພກ ທີ່ບໍ່ສາມາດນຳໃຊ້ໄດ້.
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 34 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານລັດຖະກອນ.**

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ - ລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຫາຜົນປະໂຫຍດແກ່ຕົນ, ຄອບຄົວຍາດພີ່ນ້ອງ ແລະ ພັກພວກຂອງຕົນ.
2. ທວງເອົາ, ຂໍເອົາ, ຮັບເອົາ ສິນບົນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່.
4. ກົດໜ່ວງ, ຖ່ວງດຶງເອກະສານ ໃນການແກ້ໄຂບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງໄພພິບັດ.
5. ຮຽກຮ້ອງ ເອົາຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ.
6. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ.
7. ເປີດເຜີຍຄວາມລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.
8. ເພີ່ມ ຫຼື ຫຼຸດ ອັດຕາຄ່າຊ່ວຍເຫຼືອ ນຳໃຊ້ລາຍຮັບຈາກການຄຸ້ມຄອງໄພພິບັດ ຕາມລຳພັງໃຈ.

**ມາດຕາ 35 ຂໍ້ຫ້າມສຳລັບຜູ້ປະສົບໄພພິບັດ.**

ຫ້າມຜູ້ປະສົບໄພພິບັດ ມີພຶດຕິກຳ ດັ່ງນີ້:

1. ລາຍງານຄວາມເສຍຫາຍ ຂອງຕົນ ແລະ ຄອບຄົວ ໂດຍບໍ່ມີມູນຄວາມຈິງ.
2. ໃຫ້ຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງ ແລະ ໃຫ້ຂໍ້ມູນເທັດ.
3. ທຳລາຍ ຫຼື ເຄື່ອນຍ້າຍຫຼັກຖານ ຫຼື ປອມແປງເອກະສານ ເພື່ອຈຸດປະສົງຂໍການຊ່ວຍເຫຼືອ.
4. ຍົກຍ້າຍຈາກບ່ອນຢູ່ອາໄສ ທີ່ໄດ້ຈັດສັນໃຫ້ ໂດຍບໍ່ໄດ້ຮັບອະນຸຍາດ.

5. ສ້າງຄວາມຫຍຸ້ງຍາກ ແລະ ຄວາມປັ່ນປ່ວນ ຢູ່ສະຖານທີ່ພັກເຊົາຊົ່ວຄາວ.

6. ລະເມີດ ແຈ້ງການ ແລະ ຄຳແນະນຳ ຂອງຄະນະກຳມະການຄຸ້ມຄອງໄພພິບັດ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

7. ສວຍໂອກາດລັກລອບເອົາຊັບສິ່ງຂອງ ຂອງຜູ້ປະສົບໄພພິບັດດ້ວຍກັນ.

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 8
## ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນເຂົ້າໃນວຽກງານກອງທຶນຄຸ້ມຄອງໄພພິບັດ ຈະໄດ້ຮັບການຍ້ອງຍໍ ຕາມຄວາມເໝາະສົມ.

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໄໝ ຫຼື ດຳເນີນຄະດີຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ.**

ມອບໃຫ້ສະພາບໍລິຫານກອງທຶນຄຸ້ມຄອງໄພພິບັດ ແລະ ກອງເລຂາແຕ່ລະຂັ້ນ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເຂັ້ມງວດ ແລະ ໄດ້ຮັບຜົນດີ, ພ້ອມທັງລາຍງານສະພາບການເຄື່ອນໄຫວຮອບດ້ານຂອງກອງທຶນຄຸ້ມຄອງໄພພິບັດ ໃຫ້ຂັ້ນເທິງ ປີລະສອງຄັ້ງ.

**ມາດຕາ 39 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ວັນເຈົ້າແຂວງໄດ້ລົງລາຍເຊັນປະກາດໃຊ້ເປັນຕົ້ນໄປ.

ເຈົ້າແຂວງ

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ປອ ບົວຄົງ ນາມມະວົງ